## ສາລະບານ

ກົດໝາຍ ........ 4
ພາກທີ I ບົດບັນຍັດທົ່ວໄປ ........ 4
ມາດຕາ 1.(ໃໝ່) ທີ່ຕັ້ງ ແລະ ພາລະບົດບາດ ຂອງສານປະຊາຊົນ ........ 4
ມາດຕາ 2.(ໃໝ່) ສິດ ແລະ ໜ້າທີ່ຂອງສານປະຊາຊົນ ........ 4
ມາດຕາ 3.(ໃໝ່) ຄະດີທີ່ພິຈາລະນາຢູ່ສານປະຊາຊົນ ........ 5
ມາດຕາ 4.(ໃໝ່) ຄວາມສະເໝີພາບຂອງພົນລະເມືອງຕໍ່ໜ້າກົດໝາຍ ແລະສານ ........ 5
ມາດຕາ 5.(ໃໝ່) ການພິພາກສາຄະດີຕາມກົດໝາຍ ແລະ ຜົນສັກສິດຂອງຄໍາຕັດສິນຂອງສານ ປະຊາຊົນ ........ 5
ມາດຕາ 6.(ໃໝ່) ການພິຈາລະນາຄະດີເປັນໝູ່ຄະນະ ........ 6
ມາດຕາ 7. (ໃໝ່) ຄວາມເປັນເອກະລາດຂອງສານ ........ 6
ມາດຕາ 8. ພາສາທີ່ໃຊ້ໃນການດໍາເນີນຄະດີ ........ 6
ມາດຕາ 9. ການພິຈາລະນາຄະດີຢູ່ທີ່ປະຊຸມສານຢ່າງເປີດເຜີຍ ........ 6
ມາດຕາ10. (ໃໝ່) ສິດໃນການຕໍ່ສູ້ຄະດີ ........ 6
ມາດຕາ11 (ໃໝ່) ການເຂົ້າຮ່ວມຂອງແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ແລະອົງການ ຈັດຕັ້ງສັງຄົມໃນ ........ 6
ມາດຕາ 12.(ໃໝ່) ຂັ້ນການພິຈາລະນາຕັດສິນຂອງສານ ........ 7
ມາດຕາ13.(ໃໝ່) ການກວດກາຄໍາຕັດສິນ ແລະ ການຄຸ້ມຄອງສານປະຊາຊົນ ........ 7
ມາດຕາ 14.(ໃໝ່) ການເຂົ້າຮ່ວມ ແລະ ການຕິດຕາມກວດກາຂອງໄອຍະການປະຊາຊົນໃນການດໍາ ເນີນຄະດີ ........ 7
ພາກທີ II ລະບົບການຈັດຕັ້ງສານປະຊາຊົນແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ........ 8
ມາດຕາ 15.(ໃໝ່) ລະບົບສານປະຊາຊົນແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ........ 8
ໝວດທີ 1 ສານປະຊາຊົນສູງສຸດ ........ 8
ມາດຕາ16.(ໃໝ່) ທີ່ຕັ້ງ ແລະ ພາລະບົດບາດຂອງສານປະຊາຊົນສູງສຸດ ........ 8
ມາດຕາ 17.(ໃໝ່) ສະຖານທີ່ຕັ້ງຂອງສານປະຊາຊົນສູງສຸດ ........ 8
ມາດຕາ 19.(ໃໝ່) ສິດ ແລະ ໜ້າທີ່ຂອງ ສານປະຊາຊົນສູງສຸດ ........ 9
ມາດຕາ 20.(ໃໝ່) ການເລືອກຕັ້ງ ຫຼື ປົດຕໍາແໜ່ງ ປະທານສານປະຊາຊົນສູງສຸດ ........ 9
ມາດຕາ 21.(ໃໝ່) ສິດ ແລະ ໜ້າທີ່ຂອງ ປະທານສານປະຊາຊົນສູງສຸດ ........ 10
ມາດຕາ 22.(ໃໝ່) ຮອງປະທານສານປະຊາຊົນສູງສຸດ ........ 10
ມາດຕາ 23.(ໃໝ່) ສິດ ແລະ ໜ້າທີ່ຂອງຜູ້ພິພາກສາ ........ 11
ມາດຕາ 24.(ໃໝ່) ສະພາຜູ້ພິພາກສາ ........ 11
ມາດຕາ 25.(ໃໝ່) ຄະນະສານຂອງສານປະຊາຊົນສູງສຸດ ........ 12

ມາດຕາ 26. (ໃໝ່) ກິງຈັກຊ່ວຍວຽກຂອງສານປະຊາຊົນສູງສຸດ ......12
ໝວດທີ 2 ສານອຸທອນ ......13
ມາດຕາ 27.(ໃໝ່) ທີ່ຕັ້ງ ແລະ ພາລະບົດບາດ ຂອງສານອຸທອນ......13
ມາດຕາ 28.(ໃໝ່ ) ການສ້າງຕັ້ງສານອຸທອນ ......13
ມາດຕາ 29.(ໃໝ່) ໂຄງປະກອບຂອງສານອຸທອນ ......13
ມາດຕາ 30.(ໃໝ່) ສິດ ແລະ ໜ້າທີ່ຂອງສານອຸທອນ ......13
ມາດຕາ 31.(ໃໝ່) ສິດໃນການທວງເອົາຄະດີ......14
ມາດຕາ 32.( ໃໝ່ ) ສິດ ແລະ ໜ້າທີ່ຂອງປະທານສານອຸທອນ ......14
ມາດຕາ 33.(ໃໝ່) ຮອງປະທານສານອຸທອນ ......14
ມາດຕາ 34.(ໃໝ່) ຄະນະປະທານສານອຸທອນ......14
ມາດຕາ 35.(ໃໝ່) ຄະນະສານຂອງສານອຸທອນ ......15
ມາດຕາ 36.(ໃໝ່) ກົງຈັກຊ່ວຍວຽກຂອງສານອຸທອນ ......15
ໝວດທີ 3 ສານປະຊາຊົນແຂວງ , ນະຄອນ ......15
ມາດຕາ 37.(ໃໝ່) ທີ່ຕັ້ງ ແລະ ພາລະບົດບາດຂອງສານປະຊາຊົນແຂວງ, ນະຄອນ ......15
ມາດຕາ 38.(ໃໝ່) ການສ້າງຕັ້ງສານປະຊາຊົນແຂວງ, ນະຄອນ ......15
ມາດຕາ 39.(ໃໝ່) ໂຄງປະກອບຂອງສານປະຊາຊົນແຂວງ, ນະຄອນ......15
ມາດຕາ 40.(ໃໝ່) ສິດ ແລະ ໜ້າທີ່ຂອງສານປະຊາຊົນແຂວງ, ນະຄອນ ......16
ມາດຕາ 41.(ໃໝ່) ສິດໃນການທວງ ແລະ ສະເໜີສົ່ງຄະດີ ......16
ມາດຕາ 42.(ໃໝ່) ສິດ ແລະ ໜ້າທີ່ຂອງປະທານສານປະຊາຊົນແຂວງ, ນະຄອນ ......16
ມາດຕາ 43.(ໃໝ່) ຮອງປະທານສານປະຊາຊົນແຂວງ, ນະຄອນ ......17
ມາດຕາ 44.(ໃໝ່) ຄະນະປະທານສານປະຊາຊົນແຂວງ, ນະຄອນ......17
ມາດຕາ45.(ໃໝ່) ຄະນະສານຂອງສານປະຊາຊົນແຂວງ, ນະຄອນ......17
ມາດຕາ 46.(ໃໝ່) ກົງຈັກຊ່ວຍວຽກຂອງສານປະຊາຊົນແຂວງ, ນະຄອນ......17
ໝວດທີ 4 ສານປະຊາຊົນເມືອງ, ເທດສະບານ ......18
ມາດຕາ 47.(ໃໝ່) ທີ່ຕັ້ງ ແລະ ພາລະບົດບາດ ຂອງສານປະຊາຊົນເມືອງ, ເທດສະບານ......18
ມາດຕາ 48.(ໃໝ່) ການສ້າງຕັ້ງສານປະຊາຊົນເມືອງ, ເທດສະບານ ......18
ມາດຕາ49.(ໃໝ່) ໂຄງປະກອບຂອງສານປະຊາຊົນເມືອງ, ເທດສະບານ......18
ມາດຕາ 50.(ໃໝ່) ສິດ ແລະ ໜ້າທີ່ຂອງສານປະຊາຊົນເມືອງ, ເທດສະບານ ......18
ມາດຕາ 51.(ໃໝ່) ກົງຈັກຊ່ວຍວຽກຂອງສານປະຊາຊົນເມືອງ, ເທດສະບານ ......19
ໝວດທີ 5 ສານທະຫານ......19
ມາດຕາ 52.(ໃໝ່) ທີ່ຕັ້ງ ແລະ ພາລະບົດບາດຂອງສານທະຫານ ......19
ມາດຕາ 53.(ໃໝ່) ລະບົບການຈັດຕັ້ງ ແລະ ບຸກຄະລາກອນຂອງສານທະຫານ ......19

ມາດຕາ 54.(ໃໝ່) ການເຄື່ອນໄຫວວຽກງານຂອງສານທະຫານ....................................................19
ພາກທີ III ຜູ້ພິພາກສາ ....................................................................................20
ມາດຕາ 55.(ໃໝ່) ເງື່ອນໄຂ ແລະ ມາດຕະຖານຂອງຜູ້ພິພາກສາ ................................................20
ມາດຕາ 56.(ໃໝ່) ສິດ ແລະ ໜ້າທີ່ຂອງຜູ້ພິພາກສາ...............................................................20
ມາດຕາ 57.(ໃໝ່) ການປົກປ້ອງຜູ້ພິພາກສາ........................................................................20
ພາກທີ IV ກອງປະຊຸມໃຫຍ່ຜູ້ພິພາກສາ ........................................................................21
ມາດຕາ 58.(ໃໝ່) ທີ່ຕັ້ງ, ພາລະບົດບາດ ແລະ ການປະກອບຂອງກອງປະຊຸມໃຫຍ່ຜູ້ພິພາກສາ.......21
ມາດຕາ 59.(ໃໝ່) ໜ້າທີ່ຂອງກອງປະຊຸມໃຫຍ່ຜູ້ພິພາກສາ .....................................................21
ມາດຕາ 60. (ໃໝ່) ການຮຽກໂຮມກອງປະຊຸມໃຫຍ່ຜູ້ພິພາກສາ ................................................21
ພາກທີ V ຈຳນວນພົນ, ງົບປະມານ, ເຄື່ອງແບບ ແລະ ຕາປະທັບ ຂອງສານປະຊາຊົນ.......................22
ມາດຕາ 61.(ໃໝ່) ຈຳນວນພົນຂອງສານປະຊາຊົນ ...............................................................22
ມາດຕາ 62.(ໃໝ່ ) ງົບປະມານຂອງສານປະຊາຊົນ...............................................................22
ມາດຕາ 63.(ໃໝ່) ເຄື່ອງແບບຂອງສານປະຊາຊົນ .................................................................22
ມາດຕາ 64.(ໃໝ່) ຕາປະທັບຂອງສານປະຊາຊົນ ..................................................................22
ພາກທີ VI ບົດບັນຍັດສຸດທ້າຍ...........................................................................................23
ມາດຕາ 65.(ໃໝ່) ການຈັດຕັ້ງປະຕິບັດ ..............................................................................23
ມາດຕາ 66.(ໃໝ່) ຜົນສັກສິດ .........................................................................................23

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

ສະພາແຫ່ງຊາດ　　　　　　　　　　　　　　ເລກທີ 05 /ສພຊ

ນະຄອນຫລວງວຽງຈັນ, ວັນທີ 21 ຕຸລາ 2003

# ກົດໝາຍວ່າດ້ວຍສານປະຊາຊົນ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ພາກທີ I　ບົດບັນຍັດທົ່ວໄປ

### ມາດຕາ 1.(ໃໝ່) ທີ່ຕັ້ງ ແລະ ພາລະບົດບາດ ຂອງສານປະຊາຊົນ

ສານປະຊາຊົນແມ່ນອົງການພິພາກສາຂອງລັດ, ມີພາລະບົດບາດດຳເນີນການພິພາກສາຄະດີ ແນໃສ່ສຶກສາອົບຮົມພົນລະເມືອງ ໃຫ້ມີນ້ຳໃຈຮັກຊາດ, ຮັກລະບອບປະຊາທິປະໄຕ ປະຊາຊົນ, ປົກປັກຮັກສາ ແລະເສີມຂະຫຍາຍໝາກຜົນຂອງການປະຕິວັດ, ລະບອບການເມືອງ, ເສດຖະກິດ, ວັດທະນະທຳ-ສັງຄົມ, ອົງການຈັດຕັ້ງຂອງພັກ, ອົງການຈັດຕັ້ງຂອງລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ແລະອົງການຈັດຕັ້ງສັງຄົມ, ປົກປັກຮັກສາສິດຜົນປະໂຫຍດອັນຊອບທຳຂອງພົນລະເມືອງ, ຮັບປະກັນຄວາມຍຸຕິທຳ, ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ເພີ່ມທະວີນິຕິທຳ, ກຳຈັດ ແລະ ສະກັດກັ້ນການລະເມີດກົດໝາຍ.

ຢູ່ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ມີແຕ່ສານເທົ່ານັ້ນ ຈຶ່ງມີສິດອຳນາດພິພາກສາຄະດີ ບົນພື້ນຖານການເຄົາລົບກົດໝາຍຢ່າງເຂັ້ມງວດ.

### ມາດຕາ 2.(ໃໝ່) ສິດ ແລະ ໜ້າທີ່ຂອງສານປະຊາຊົນ

ສານປະຊາຊົນມີສິດ ແລະ ໜ້າທີ່:

1. ພິຈາລະນາຕັດສິນຄະດີ, ສຶກສາອົບຮົມ, ລົງໂທດ ຜູ້ລະເມີດກົດໝາຍ;
2. ຊອກຫາ, ກຳຈັດສາເຫດ ແລະ ເງື່ອນໄຂທີ່ພາໃຫ້ມີການກະທຳຜິດ;

3. ຍົກລະດັບຄວາມຮູ້ທາງດ້ານການເມືອງ, ສະຕິເຄົາລົບ ແລະປະຕິບັດກົດໝາຍ, ລະບຽບວິໄນແຫ່ງລັດ ແລະ ລະບຽບການດຳລົງຊີວິດຂອງສັງຄົມ ຂອງພົນລະເມືອງໃຫ້ສູງຂຶ້ນ;
4. ປະສານສົມທົບກັບອົງການຕ່າງໆທີ່ກ່ຽວຂ້ອງທັງພາຍໃນ ແລະຕ່າງປະເທດ ໃນການເຄື່ອນໄຫວປະຕິບັດໜ້າທີ່ວຽກງານຂອງຕົນ;
5. ພົວພັນ ແລະຮ່ວມມືກັບຕ່າງປະເທດກ່ຽວກັບວຽກງານຍຸຕິທຳ ແລະກົດໝາຍ.

**ມາດຕາ 3.(ໃໝ່) ຄະດີທີ່ພິຈາລະນາຢູ່ສານປະຊາຊົນ**

ສານປະຊາຊົນພິຈາລະນາຄະດີ ອາຍາ, ຄະດີແພ່ງ, ຄະດີການຄ້າ, ຄະດີຄອບຄົວ, ຄະດີເດັກ ແລະ ຄະດີອື່ນໆ ທີ່ກົດໝາຍໄດ້ມອບສິດອຳນາດໃຫ້.

**ມາດຕາ 4.(ໃໝ່) ຄວາມສະເໝີພາບຂອງພົນລະເມືອງຕໍ່ໜ້າກົດໝາຍ ແລະສານ**

ພົນລະເມືອງລາວທຸກຄົນ ມີຄວາມສະເໝີພາບຕໍ່ໜ້າກົດໝາຍ ແລະສານ ໂດຍບໍ່ຈຳແນກເພດ, ເຊື້ອຊາດ, ຊົນເຜົ່າ, ຖານະທາງດ້ານເສດຖະກິດ ແລະ ສັງຄົມ, ພາສາ, ລະດັບການສຶກສາ, ອາຊີບ, ຄວາມເຊື່ອຖື, ພູມລຳເນົາ ແລະ ອື່ນໆ.

ພົນລະເມືອງລາວມີສິດຮ້ອງຟ້ອງຕໍ່ສານ ກ່ຽວກັບການກະທຳທີ່ແຕະຕ້ອງເຖິງຊີວິດ, ສຸຂະພາບ, ສິດ, ເສລີພາບ, ກຽດສັກສີ ຫຼື ຊັບສົມບັດຂອງຕົນ.

ຄົນຕ່າງປະເທດ, ຊາວຕ່າງດ້າວ ແລະ ຜູ້ບໍ່ມີສັນຊາດ ທີ່ຢູ່ໃນດິນແດນແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ມີສິດເທົ່າທຽມກັນກັບພົນລະເມືອງລາວ ຖ້າວ່າກົດໝາຍຫາກບໍ່ໄດ້ກຳນົດໄວ້ຢ່າງອື່ນ.

**ມາດຕາ 5.(ໃໝ່) ການພິພາກສາຄະດີຕາມກົດໝາຍ ແລະ ຜົນສັກສິດຂອງຄຳຕັດສິນຂອງສານປະຊາຊົນ**

ໃນການພິພາກສາຄະດີ ສານຕ້ອງປະຕິບັດຕາມກົດໝາຍ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ. ໃນກໍລະນີທີ່ມີບັນຫາໃດໜຶ່ງ ຫາກບໍ່ໄດ້ກຳນົດໄວ້ໃນກົດໝາຍ ສານຕ້ອງຕັດສິນບັນຫານັ້ນໃຫ້ສອດຄ່ອງກັບຫຼັກການນິຕິທຳ ແລະປະເພນີສານ. ສຳລັບການກະທຳໃດໜຶ່ງທີ່ບໍ່ໄດ້ກຳນົດໄວ້ໃນກົດໝາຍອາຍານັ້ນ ສານຈະນຳມາພິຈາລະນາຕັດສິນລົງໂທດທາງອາຍາບໍ່ໄດ້.

ຄຳພິພາກສາຂອງສານປະຊາຊົນສູງສຸດ ກ່ຽວກັບບັນຫາໃດໜຶ່ງ ຊຶ່ງກົດໝາຍບໍ່ໄດ້ກຳນົດ ຫຼື ໄດ້ກຳນົດໄວ້ ແຕ່ບໍ່ຊັດເຈນນັ້ນ ໃຫ້ຖືເປັນປະເພນີສານ ຊຶ່ງສານປະຊາຊົນຕ້ອງໄດ້ປະຕິບັດຕາມຈົນກວ່າບັນຫານັ້ນ ຈະໄດ້ກຳນົດໄວ້ໃນກົດໝາຍ.

ສານອອກຄຳຕັດສິນໃນນາມ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

ຄຳຕັດສິນຂອງສານປະຊາຊົນ ທີ່ໃຊ້ໄດ້ຢ່າງເດັດຂາດແລ້ວນັ້ນ ທຸກອົງການຈັດຕັ້ງຂອງພັກ, ອົງການຈັດຕັ້ງຂອງລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ວິສາຫະກິດ ແລະພົນລະເມືອງທຸກຄົນ ຕ້ອງເຄົາລົບ; ບຸກຄົນ ແລະອົງການຈັດຕັ້ງທີ່ມີສ່ວນກ່ຽວຂ້ອງຕ້ອງປະຕິ

ບັດຢ່າງເຂັ້ມງວດ ຕາມທີ່ໄດ້ກໍາ ນົດໄວ້ໃນມາດຕາ 85 ຂອງລັດຖະທໍາມະນູນ.

ຄໍາຕັດສິນຂອງສານປະຊາຊົນ ທີ່ໃຊ້ໄດ້ຢ່າງເດັດຂາດແລ້ວນັ້ນ ບໍ່ສາມາດປ່ຽນແປງໄດ້ແຕ່ຢ່າງໃດ.

**ມາດຕາ 6.(ໃໝ່) ການພິຈາລະນາຄະດີເປັນໝູ່ຄະນະ**

ຄະນະສານຕັດສິນຂອງສານປະຊາຊົນສູງສຸດ, ສານອຸທອນ, ສານປະຊາຊົນແຂວງ, ນະຄອນ, ສານປະຊາຊົນເມືອງ, ເທດສະບານ ປະກອບດ້ວຍຜູ້ພິພາກສາສາມຄົນ, ໃນນັ້ນຜູ້ໜຶ່ງເປັນປະທານ ແລະ ອີກສອງຄົນເປັນຄະນະ.

ຄໍາຕົກລົງຂອງຄະນະສານ ຕ້ອງຖືເອົາຕາມສຽງສ່ວນຫຼາຍ.

ການພິຈາລະນາຕັດສິນຄະດີຕ້ອງຮັບປະກັນຄວາມລັບ.

**ມາດຕາ 7. (ໃໝ່) ຄວາມເປັນເອກະລາດຂອງສານ**

ໃນການພິຈາລະນາຕັດສິນຄະດີ ຜູ້ພິພາກສາຕ້ອງເປັນເອກະລາດ ແລະມີແຕ່ປະຕິບັດຕາມກົດໝາຍເທົ່ານັ້ນ.

**ມາດຕາ 8. ພາສາທີ່ໃຊ້ໃນການດໍາເນີນຄະດີ**

ໃນການດໍາເນີນຄະດີໃຫ້ໃຊ້ພາສາລາວ; ຜູ້ເຂົ້າຮ່ວມໃນຄະດີທີ່ບໍ່ຮູ້ພາສາລາວ ມີສິດໃຊ້ພາສາຕົນເອງ ໂດຍຜ່ານຜູ້ແປພາສາ.

**ມາດຕາ 9. ການພິຈາລະນາຄະດີຢູ່ທີ່ປະຊຸມສານຢ່າງເປີດເຜີຍ**

ການພິຈາລະນາຄະດີຢູ່ທີ່ປະຊຸມສານຕ້ອງດໍາເນີນຢ່າງເປີດເຜີຍ ເວັ້ນເສັຍແຕ່ກໍລະນີທີ່ຄະດີຫາກກ່ຽວຂ້ອງກັບຄວາມລັບຂອງລັດ ຫຼື ຂອງສັງຄົມນັ້ນ ຕ້ອງດໍາເນີນຢ່າງປິດລັບ.

**ມາດຕາ10. (ໃໝ່) ສິດໃນການຕໍ່ສູ້ຄະດີ**

ຜູ້ຖືກຫາໃນຄະດີອາຍາ ແລະຄູ່ຄວາມໃນຄະດີແພ່ງ ມີສິດຕໍ່ສູ້ຄະດີດ້ວຍຕົນເອງ ຫຼືເອົາທະນາຍຄວາມຊ່ວຍເຫຼືອທາງດ້ານກົດໝາຍ, ເອົາຜູ້ຕາງໜ້າຕໍ່ສູ້ຄະດີ ເພື່ອປົກປ້ອງສິດ ແລະຜົນປະໂຫຍດອັນຊອບທໍາຂອງຕົນ.

ລະບຽບການເຂົ້າຮ່ວມຂອງທະນາຍຄວາມ ແລະ ຜູ້ຕາງໜ້າ ໃນການດໍາເນີນຄະດີ ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍການດໍາເນີນຄະດີອາຍາ ແລະ ກົດໝາຍວ່າດ້ວຍການດໍາເນີນຄະດີແພ່ງ.

**ມາດຕາ11 (ໃໝ່) ການເຂົ້າຮ່ວມຂອງແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ແລະອົງການຈັດຕັ້ງສັງຄົມໃນການດໍາເນີນຄະດີຂອງສານປະຊາຊົນ**

ຜູ້ຕາງໜ້າຂອງແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ແລະອົງການຈັດຕັ້ງສັງຄົມ ມີສິດເຂົ້າຮ່ວມໃນການດຳເນີນຄະດີຢູ່ສານປະຊາຊົນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ແລະກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ.

**ມາດຕາ 12.(ໃໝ່) ຂັ້ນການພິຈາລະນາຕັດສິນຂອງສານ**

ສານປະຊາຊົນຕັດສິນເປັນສາມຂັ້ນຄື:

- ຂັ້ນຕົ້ນ;
- ຂັ້ນອຸທອນ;
- ຂັ້ນລົບລ້າງ.

ສານປະຊາຊົນເມືອງ, ເທດສະບານ ຕັດສິນເປັນຂັ້ນຕົ້ນຕາມຂໍ້ມູນຫຼັກຖານ ແລະ ຕາມກົດໝາຍ;

ສານປະຊາຊົນແຂວງ, ນະຄອນ ຕັດສິນຕາມຂໍ້ມູນຫຼັກຖານ ແລະ ຕາມກົດໝາຍ:

- ເປັນຂັ້ນຕົ້ນ;
- ເປັນຂັ້ນອຸທອນ ຄະດີທີ່ສານປະຊາຊົນເມືອງ, ເທດສະບານ ໄດ້ຕັດສິນເປັນຂັ້ນຕົ້ນແລ້ວ;

ສານອຸທອນ ພິພາກສາເປັນຂັ້ນອຸທອນ ຕາມຂໍ້ມູນຫຼັກຖານ ແລະ ຕາມກົດໝາຍ;

ສານປະຊາຊົນສູງສຸດ ພິພາກສາເປັນຂັ້ນລົບລ້າງ ຕາມກົດໝາຍ.

**ມາດຕາ13.(ໃໝ່) ການກວດກາຄຳຕັດສິນ ແລະ ການຄຸ້ມຄອງສານປະຊາຊົນ**

ເພື່ອຮັບປະກັນໃຫ້ສານປະຊາຊົນ ແລະສານທະຫານ ດຳເນີນຄະດີໃຫ້ຖືກຕ້ອງຕາມກົດໝາຍ ແລະເປັນເອກະພາບໃນທົ່ວປະເທດ.

ສານປະຊາຊົນສູງສຸດ ກວດກາທາງດ້ານກົດໝາຍ ການດຳເນີນຄະດີ ແລະການພິພາກສາເປັນຂັ້ນອຸທອນຂອງສານປະຊາຊົນ ແລະ ສານທະຫານຂັ້ນສູງ;

ສານອຸທອນກວດກາທາງດ້ານຂໍ້ມູນຫຼັກຖານ ແລະທາງດ້ານກົດໝາຍການດຳເນີນຄະດີ ແລະການຕັດສິນຂອງສານປະຊາຊົນແຂວງ, ນະຄອນ ທີ່ຂຶ້ນກັບສິດອຳນາດຂອງຕົນ.

ສານປະຊາຊົນແຂວງ, ນະຄອນ ກວດກາທາງດ້ານຂໍ້ມູນຫລັກຖານ ແລະທາງດ້ານກົດໝາຍການດຳເນີນຄະດີ ແລະ ການຕັດສິນຂອງສານປະຊາຊົນເມືອງ, ເທດສະບານ ທີ່ຂຶ້ນກັບສິດອຳນາດຂອງຕົນ.

ສານປະຊາຊົນສູງສຸດຄຸ້ມຄອງທາງດ້ານບໍລິຫານ ຕໍ່ສານປະຊາຊົນທຸກຂັ້ນ ແລະ ສານທະຫານ.

**ມາດຕາ 14.(ໃໝ່) ການເຂົ້າຮ່ວມ ແລະ ການຕິດຕາມກວດກາຂອງໄອຍະການປະຊາຊົນໃນການດຳເນີນຄະດີຂອງສານປະຊາຊົນ**

ໄອຍະການປະຊາຊົນເຂົ້າຮ່ວມໃນການດຳເນີນຄະດີ ຢູ່ທີ່ປະຊຸມສານ ແລະຕິດຕາມກວດກາການປະຕິບັດກົດໝາຍຂອງສານປະຊາຊົນ ຕາມລະບຽບການ ແລະໃນຂອບເຂດທີ່ກົດໝາຍໄດ້ກຳນົດໄວ້.

## ພາກທີ II ລະບົບການຈັດຕັ້ງສານປະຊາຊົນແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**ມາດຕາ 15.(ໃໝ່) ລະບົບສານປະຊາຊົນແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ລະບົບສານປະຊາຊົນແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ປະກອບດ້ວຍ :

ສານປະຊາຊົນສູງສຸດ;

ສານອຸທອນ;

ສານປະຊາຊົນແຂວງ , ນະຄອນ;

ສານປະຊາຊົນເມືອງ, ເທດສະບານ;

ສານທະຫານ.

ສານອຸທອນ, ສານປະຊາຊົນແຂວງ, ນະຄອນ ແລະສານປະຊາຊົນເມືອງ, ເທດສະບານ ເອີ້ນວ່າສານປະຊາຊົນທ້ອງຖິ່ນ.

### ໝວດທີ 1 ສານປະຊາຊົນສູງສຸດ

**ມາດຕາ16.(ໃໝ່) ທີ່ຕັ້ງ ແລະ ພາລະບົດບາດຂອງສານປະຊາຊົນສູງສຸດ**

ສານປະຊາຊົນສູງສຸດແມ່ນອົງການພິພາກສາສູງສຸດຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ມີພາລະບົດບາດດຳເນີນການພິພາກສາຄະດີ, ຄຸ້ມຄອງທາງດ້ານການຈັດຕັ້ງ ແລະຊີ້ນຳການເຄື່ອນໄຫວວຽກງານ ຂອງສານປະຊາຊົນທ້ອງຖິ່ນ ແລະ ສານທະຫານໃນທົ່ວປະເທດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 17.(ໃໝ່) ສະຖານທີ່ຕັ້ງຂອງສານປະຊາຊົນສູງສຸດ**

ສານປະຊາຊົນສູງສຸດຕັ້ງຢູ່ນະຄອນຫຼວງວຽງຈັນ.

**ມາດຕາ 18.(ໃໝ່) ໂຄງປະກອບຂອງສານປະຊາຊົນສູງສຸດ**

ສານປະຊາຊົນສູງສຸດປະກອບດ້ວຍ :

ປະທານ;

ບັນດາຮອງປະທານ;

ບັນດາຜູ້ພິພາກສາ;

ສະພາຜູ້ພິພາກສາ;

ບັນດາຄະນະສານ;

ກົງຈັກຊ່ວຍວຽກ.

**ມາດຕາ 19.(ໃໝ່) ສິດ ແລະ ໜ້າທີ່ຂອງ ສານປະຊາຊົນສູງສຸດ**

ສານປະຊາຊົນສູງສຸດມີສິດ ແລະ ໜ້າທີ່ :

1. ແນະນຳ ແລະ ກວດກາຄວາມຖືກຕ້ອງ ແລະ ຄວາມເປັນເອກະພາບ ທາງດ້ານກົດໝາຍໃນການດຳເນີນຄະດີ ຂອງສານປະຊາຊົນທ້ອງຖິ່ນ ແລະ ສານທະຫານ;
2. ແນະນຳທາງດ້ານປະເພນີສານ ໃຫ້ສານປະຊາຊົນທ້ອງຖິ່ນ ແລະ ສານທະຫານ;
3. ພິຈາລະນາເປັນຂັ້ນລົບລ້າງ ທາງດ້ານກົດໝາຍ ຄະດີທີ່ສານອຸທອນ, ສານປະຊາຊົນແຂວງ, ນະຄອນ ໄດ້ພິພາກສາເປັນຂັ້ນອຸທອນ ຊຶ່ງຖືກຂໍລົບລ້າງໂດຍຄູ່ຄວາມ ຫຼື ຖືກຄັດຄ້ານໂດຍໄອຍະການປະຊາຊົນ;
4. ພິຈາລະນາເປັນຂັ້ນຮື້ຟື້ນ ຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ;
5. ຄົ້ນຄວ້າກ່ຽວກັບອຳນາດສານໃນທົ່ວປະເທດ;
6. ເຮັດບົດອະທິບາຍມະຕິກອງປະຊຸມໃຫຍ່ຜູ້ພິພາກສາ ເພື່ອໃຫ້ສານປະຊາຊົນທຸກຂັ້ນ ແລະ ສານທະຫານເຂົ້າໃຈ ແລະຈັດຕັ້ງປະຕິບັດໃຫ້ຖືກຕ້ອງ;
7. ຊີ້ນຳສານອຸທອນ, ສານປະຊາຊົນແຂວງ, ນະຄອນ ແລະ ສານປະຊາຊົນເມືອງ, ເທດສະບານ ທາງດ້ານການຈັດຕັ້ງ ແລະ ດ້ານບໍລິຫານ;
8. ວາງມາດຕະການອັນຈຳເປັນ ກ່ຽວກັບບັນຫາການຈັດຕັ້ງ, ການປັບປຸງ ແລະການບໍລິຫານສານ;
9. ຊີ້ນຳວຽກງານກໍ່ສ້າງຜູ້ພິພາກສາ,ຈ່າສານ ແລະພະນັກງານຂອງສານ;
10. ກວດກາການຈັດຕັ້ງປະຕິບັດວຽກງານຂອງສານ, ຄົ້ນຄ້ວາ ແລະສັງລວມພາກປະຕິບັດຂອງສານ, ຈັດຕັ້ງວຽກງານສະຖິຕິສານ, ເຮັດບົດວິໄຈສະຖິຕິສານ ແລະວຽກງານອື່ນໆຂອງສານ;
11. ປະຕິບັດສິດ ແລະໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 20.(ໃໝ່) ການເລືອກຕັ້ງ ຫຼື ປົດຕຳແໜ່ງ ປະທານສານປະຊາຊົນສູງສຸດ**

ປະທານສານປະຊາຊົນສູງສຸດຖືກເລືອກຕັ້ງ ຫຼື ປົດຕຳແໜ່ງໂດຍສະພາແຫ່ງຊາດ ຕາມການສະເໜີຂອງປະທານປະເທດ.

ປະທານສານປະຊາຊົນສູງສຸດ ມີອາຍຸການເທົ່າກັບອາຍຸການຂອງສະພາແຫ່ງຊາດ.

**ມາດຕາ 21.(ໃໝ່) ສິດ ແລະ ໜ້າທີ່ຂອງ ປະທານສານປະຊາຊົນສູງສຸດ**

ປະທານສານປະຊາຊົນສູງສຸດມີສິດນັ່ງເປັນປະທານໃນທຸກຄະນະສານຕັດສິນ ຂອງສານປະຊາຊົນສູງສຸດ.

ປະທານສານປະຊາຊົນສູງສຸດມີສິດ ແລະໜ້າທີ່ :

1. ຊີ້ນຳ ນຳພາວຽກງານຂອງສານປະຊາຊົນສູງສຸດ, ສະພາຜູ້ພິພາກສາ, ກອງປະຊຸມໃຫຍ່ຜູ້ພິພາກສາ ແລະ ຮຽກໂຮມກອງປະຊຸມສະພາຜູ້ພິພາກສາ ແລະ ກອງປະຊຸມໃຫຍ່ຜູ້ພິພາກສາ;
2. ລາຍງານສະພາບການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງສານປະຊາຊົນ ແລະ ສານທະຫານຕໍ່ສະພາແຫ່ງຊາດ ຫຼື ຄະນະປະຈຳສະພາແຫ່ງຊາດ ໃນເວລາທີ່ສະພາແຫ່ງຊາດບໍ່ໄດ້ເປີດປະຊຸມ;
3. ສະເໜີໃຫ້ປະທານປະເທດແຕ່ງຕັ້ງ ຫຼືປົດຕຳແໜ່ງຮອງປະທານສານປະຊາຊົນສູງສຸດ;
4. ກຳນົດຈຳນວນຜູ້ພິພາກສາຂອງສານປະຊາຊົນທຸກຂັ້ນ ແລະສະເໜີແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຜູ້ພິພາກສາຂອງສານປະຊາຊົນສູງສຸດ; ປະທານ, ຮອງປະທານ ແລະ ຜູ້ພິພາກສາຂອງສານອຸທອນ; ປະທານ, ຮອງປະທານ ແລະຜູ້ພິພາກສາຂອງສານປະຊາຊົນແຂວງ, ນະຄອນ ແລະ ສານປະຊາຊົນເມືອງ, ເທດສະບານ; ຫົວໜ້າ, ຮອງຫົວໜ້າ ແລະຜູ້ພິພາກສາຂອງສານທະຫານ ເພື່ອໃຫ້ຄະນະປະຈຳສະພາແຫ່ງຊາດ ພິຈາລະນາ;
5. ອອກຄຳແນະນຳກ່ຽວກັບການປະຕິບັດກົດໝາຍ ແລະ ການດຳເນີນຄະດີ ເພື່ອໃຫ້ຖືກຕ້ອງ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ;
6. ອອກຄຳຊີ້ຂາດກ່ຽວກັບຄຳຕັດສິນປະຫານຊີວິດ ຂອງສານປະຊາຊົນທ້ອງຖິ່ນ ແລະ ສານທະຫານ;
7. ອອກຄຳຊີ້ຂາດກ່ຽວກັບອຳນາດສານໃນທົ່ວປະເທດ;
8. ຊີ້ນຳວຽກງານຄົ້ນຄວ້າ ແລະ ສະເໜີຮ່າງກົດໝາຍ ແລະ ນິຕິກຳອື່ນໆຕໍ່ສະພາແຫ່ງຊາດ ຫຼື ຄະນະປະຈຳສະພາແຫ່ງຊາດ ພິຈາລະນາ;
9. ກຳນົດກົງຈັກຊ່ວຍວຽກຂອງສານປະຊາຊົນສູງສຸດ ແລະສານປະຊາຊົນທ້ອງຖິ່ນ ເພື່ອນຳສະເໜີຕໍ່ຄະນະປະຈຳສະພາແຫ່ງຊາດອະນຸມັດ;
10. ປະຕິບັດສິດແລະ ໜ້າທີ່ອື່ນໆຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 22.(ໃໝ່) ຮອງປະທານສານປະຊາຊົນສູງສຸດ**

ຮອງປະທານສານປະຊາຊົນສູງສຸດຖືກແຕ່ງຕັ້ງ ຫຼື ປົດຕຳແໜ່ງ ໂດຍປະທານປະເທດຕາມການສະເໜີ ຂອງປະທານສານປະຊາຊົນສູງສຸດ.

ຮອງປະທານສານປະຊາຊົນສູງສຸດຜູ້ໜຶ່ງ ເປັນຫົວໜ້າສານທະຫານຂັ້ນສູງໂດຍຕຳແໜ່ງ.

ຮອງປະທານສານປະຊາຊົນສູງສຸດ ມີສິດນັ່ງເປັນປະທານໃນທຸກຄະນະສານຕັດສິນ ຂອງສານປະຊາຊົນສູງສຸດ.

ຮອງປະທານສານປະຊາຊົນສູງສຸດ ມີໜ້າທີ່ຊ່ວຍປະທານສານປະຊາຊົນສູງສຸດ ໃນການປະຕິບັດໜ້າທີ່ວຽກງານ ແລະ ຈະໄດ້ຮັບຜິດຊອບວຽກງານໃດໜຶ່ງສະເພາະ ຕາມການມອບໝາຍຂອງປະທານສານປະຊາຊົນສູງສຸດ.

ໃນກໍລະນີທີ່ປະທານສານປະຊາຊົນສູງສຸດຕິດຂັດ ແມ່ນຮອງປະທານສານປະຊາຊົນສູງສຸດ ຜູ້ທີ່ໄດ້ຮັບມອບໝາຍເປັນຜູ້ວ່າການແທນ.

**ມາດຕາ 23.(ໃໝ່) ສິດ ແລະ ໜ້າທີ່ຂອງຜູ້ພິພາກສາ**

ສິດແລະໜ້າທີ່ຂອງຜູ້ພິພາກສາຂອງສານປະຊາຊົນສູງສຸດ ແລະສານປະຊາຊົນທ້ອງຖິ່ນໄດ້ກໍານົດໄວ້ໃນມາດຕາ 56 ຂອງກົດໝາຍສະບັບນີ້.

**ມາດຕາ 24.(ໃໝ່) ສະພາຜູ້ພິພາກສາ**

ສະພາຜູ້ພິພາກສາແມ່ນຄະນະນໍາຂອງສານປະຊາຊົນສູງສຸດ ຊຶ່ງປະກອບດ້ວຍ: ປະທານ, ບັນດາຮອງປະທານ, ບັນດາປະທານຄະນະສານ ແລະຜູ້ພິພາກສາຈໍານວນໜຶ່ງຂອງສານປະຊາຊົນສູງສຸດ ໂດຍແມ່ນຄະນະປະຈໍາສະພາແຫ່ງຊາດ ເປັນຜູ້ພິຈາລະນາຮັບຮອງເອົາ ຕາມການສະເໜີຂອງປະທານສານປະຊາຊົນສູງສຸດ.

ຈໍານວນສະມາຊິກສະພາຜູ້ພິພາກສາຂອງສານປະຊາຊົນສູງສຸດບໍ່ໃຫ້ເກີນສິບຫ້າຄົນ.

ສະພາຜູ້ພິພາກສາຂອງສານປະຊາຊົນສູງສຸດມີສິດ ແລະໜ້າທີ່ :

1. ຄົ້ນຄວ້າຮ່າງກົດໝາຍ ແລະ ຮ່າງນິຕິກໍາອື່ນໆ ຂອງສານປະຊາຊົນ;
2. ຄົ້ນຄວ້າຮ່າງຄໍາແນະນໍາຂອງສານປະຊາຊົນສູງສຸດ ກ່ຽວກັບການປະຕິບັດກົດໝາຍ ແລະການດໍາເນີນຄະດີຂອງສານປະຊາຊົນ ໃຫ້ຖືກຕ້ອງ ແລະເປັນເອກະພາບໃນທົ່ວປະເທດ;
3. ຄົ້ນຄວ້າຮ່າງຄໍາແນະນໍາ ທາງດ້ານປະເພນີສານ ຂອງສານປະຊາຊົນສູງສຸດ;
4. ຄົ້ນຄວ້າກ່ຽວກັບຄໍາຕັດສິນປະຫານຊີວິດ ຂອງສານປະຊາຊົນທ້ອງຖິ່ນ ແລະສານທະຫານ ເພື່ອສະເໜີໃຫ້ປະທານສານປະຊາຊົນສູງສຸດ ອອກຄໍາຊີ້ຂາດ;
5. ຄົ້ນຄວ້າຄໍາສະເໜີຮື້ຟື້ນຄະດີ ຂອງໄອຍະການປະຊາຊົນ;
6. ຄົ້ນຄ້ວາກ່ຽວກັບການແຕ່ງຕັ້ງ ຫຼື ປົດຕໍາແໜ່ງ ຮອງປະທານສານປະຊາຊົນສູງສຸດ ເພື່ອໃຫ້ປະທານສານປະຊາຊົນສູງສຸດສະເໜີຕໍ່ປະທານປະເທດພິຈາລະນາ;
7. ຄົ້ນຄ້ວາກ່ຽວກັບການແຕ່ງຕັ້ງ, ຍົກຍ້າຍ ຫຼືປົດຕໍາແໜ່ງຜູ້ພິພາກສາ ຂອງສານປະຊາຊົນສູງສຸດ, ປະທານ, ຮອງປະທານ ແລະຜູ້ພິພາກສາຂອງສານປະຊາຊົນທ້ອງຖິ່ນ ເພື່ອໃຫ້ປະທານສານປະຊາຊົນສູງສຸດ ສະເໜີຕໍ່ຄະນະປະຈໍາສະພາແຫ່ງຊາດ ພິຈາ

ລະນາ;

8. ກະກຽມເນື້ອໃນ ແລະ ຮູບການກອງປະຊຸມໃຫຍ່ຜູ້ພິພາກສາ;
9. ສະຫຼຸບຕີລາຄາ ແລະ ຖອດຖອນບົດຮຽນກ່ຽວກັບ ການເຄື່ອນໄຫວວຽກງານຂອງສານ ເປັນຕົ້ນແມ່ນ ການດຳເນີນຄະດີ;
10. ຄົ້ນຄວ້າຮ່າງບົດລາຍງານຂອງປະທານສານປະຊາຊົນສູງສຸດ ກ່ຽວກັບກັບການເຄື່ອນໄຫວວຽກງານຂອງສານ ເພື່ອນຳສະເໜີຕໍ່ສະພາແຫ່ງຊາດ ແລະຄະນະປະຈຳສະພາແຫ່ງຊາດ;
11. ປະຕິບັດສິດແລະ ໜ້າທີ່ອື່ນໆຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ກອງປະຊຸມສະພາຜູ້ພິພາກສາເປີດຂຶ້ນຢ່າງໜ້ອຍສາມເດືອນຕໍ່ເທື່ອ.

ກອງປະຊຸມສະພາຜູ້ພິພາກສາ ຂອງສານປະຊາຊົນສູງສຸດ ຈະດຳເນີນໄດ້ກໍຕໍ່ເມື່ອຫາກມີສະມາຊິກເຂົ້າຮວ່ມຢ່າງໜ້ອຍສອງສ່ວນສາມ ຂອງຈຳນວນສະມາຊິກສະພາຜູ້ພິພາກສາທັງໝົດ.

ຄຳຕົກລົງຂອງກອງປະຊຸມສະພາຜູ້ພິພາກສາ ຈະມີຄຸນຄ່າໄດ້ກໍຕໍ່ເມື່ອໄດ້ຮັບຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສະມາຊິກທີ່ເຂົ້າຮວ່ມກອງປະຊຸມ.

**ມາດຕາ 25.(ໃໝ່) ຄະນະສານຂອງສານປະຊາຊົນສູງສຸດ**

ຄະນະສານຂອງສານປະຊາຊົນສູງສຸດປະກອບດ້ວຍ: ຄະນະສານອາຍາ, ຄະນະສານແພ່ງ, ຄະນະສານການຄ້າ, ຄະນະສານຄອບຄົວ, ຄະນະສານເດັກ ແລະ ຄະນະສານອື່ນໆ.

ແຕ່ລະຄະນະສານຂອງສານປະຊາຊົນສູງສຸດມີ: ປະທານຄະນະສານ, ຮອງປະທານຄະນະສານ, ຜູ້ພິພາກສາ, ພະນັກງານຊ່ວຍວຽກຜູ້ພິພາກສາ ແລະຈ່າສານ.

ຄະນະສານຂອງສານປະຊາຊົນສູງສຸດມີສິດ ແລະ ໜ້າທີ່ຕາມທີ່ໄດ້ກຳນົດໄວ້ໃນຂໍ້ 3, 4, 5 ແລະ 11 ຂອງມາດຕາ 19 ຂອງກົດໝາຍສະບັບນີ້.

**ມາດຕາ 26. (ໃໝ່) ກົງຈັກຊ່ວຍວຽກຂອງສານປະຊາຊົນສູງສຸດ**

ເພື່ອຮັບປະກັນການເຄື່ອນໄຫວປະຕິບັດໜ້າທີ່ວຽກງານຂອງຕົນ ສານປະຊາຊົນສູງສຸດມີກົງຈັກຊ່ວຍວຽກຄື: ຫ້ອງການ, ກົມຈັດຕັ້ງພະນັກງານ, ກົມຄຸ້ມຄອງ-ກວດກາ ແລະສະຖິຕິສານ, ສູນບຳລຸງຜູ້ພິພາກສາ.

ໃນກໍລະນີທີ່ຈຳເປັນ, ອີງຕາມຄວາມຮຽກຮ້ອງຕ້ອງການຂອງວຽກງານໃນແຕ່ລະໄລຍະ ອາດຈະສ້າງຕັ້ງກົມ ແລະ ໜ່ວຍງານອື່ນໆ ຂຶ້ນກໍໄດ້.

ໂຄງປະກອບການຈັດຕັ້ງ, ຈຳນວນພົນ ແລະ ການເຄື່ອນໄຫວວຽກງານ ຂອງກົງຈັກຊ່ວຍວຽກໄດ້ກຳນົດໄວ້ໃນລະບຽບພາຍໃນ ຂອງສານປະຊາຊົນສູງສຸດ.

## ໝວດທີ 2     ສານອຸທອນ

**ມາດຕາ 27.(ໃໝ່) ທີ່ຕັ້ງ ແລະ ພາລະບົດບາດ ຂອງສານອຸທອນ**

ສານອຸທອນແມ່ນສານໜຶ່ງໃນລະບົບສານປະຊາຊົນແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ມີພາລະບົດບາດດຳເນີນການພິພາກສາຄະດີ ເປັນຂັ້ນອຸທອນ ຄະດີທີ່ສານປະຊາຊົນແຂວງ, ນະຄອນ ໄດ້ຕັດສິນເປັນຂັ້ນຕົ້ນແລ້ວ.

**ມາດຕາ 28.(ໃໝ່ ) ການສ້າງຕັ້ງສານອຸທອນ**

ສານອຸທອນສ້າງຕັ້ງຂື້ນຢູ່ພາກເໜືອ, ພາກກາງ ແລະພາກໃຕ້ ຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

ບັນດາແຂວງທີ່ຂື້ນກັບສານອຸທອນ ແລະບ່ອນສ້າງຕັ້ງສານອຸທອນໃນແຕ່ລະພາກນັ້ນ ກຳນົດໄວ້ໃນລະບຽບການສະເພາະ.

**ມາດຕາ 29.(ໃໝ່) ໂຄງປະກອບຂອງສານອຸທອນ**

ສານອຸທອນປະກອບດ້ວຍ:

ປະທານ;

ບັນດາຮອງປະທານ;

ບັນດາຜູ້ພິພາກສາ;

ຄະນະປະທານ;

ບັນດາຄະນະສານ;

ກົງຈັກຊ່ວຍວຽກ.

**ມາດຕາ 30.(ໃໝ່) ສິດ ແລະ ໜ້າທີ່ຂອງສານອຸທອນ**

ສານອຸທອນມີສິດ ແລະ ໜ້າທີ່ :

1. ພິຈາລະນາເປັນຂັ້ນອຸທອນ ຄະດີທີ່ສານປະຊາຊົນແຂວງ, ນະຄອນ ໄດ້ຕັດສິນເປັນຂັ້ນຕົ້ນ ຊຶ່ງຖືກຂໍອຸທອນໂດຍຄູ່ຄວາມ ຫຼື ຖືກຄັດຄ້ານໂດຍໄອຍະການປະຊາຊົນ;
2. ພິຈາລະນາເປັນຂັ້ນອຸທອນ ຄຳສັ່ງ, ຄຳຊີ້ຂາດ ແລະຄຳຕົກລົງອື່ນໆ ຂອງສານປະຊາຊົນແຂວງ, ນະຄອນ ຊຶ່ງຖືກຂໍອຸທອນໂດຍຄູ່ຄວາມ ຫຼື ຖືກຄັດຄ້ານໂດຍໄອຍະການປະຊາຊົນ;
3. ຜັນຂະຫຍາຍຄຳແນະນຳທາງດ້ານກົດໝາຍ ແລະທາງດ້ານປະເພນີສານ ຂອງສານປະຊາຊົນສູງສຸດ ໃຫ້ສານປະຊາຊົນແຂວງ, ນະຄອນ ແລະ ເມືອງ, ເທດສະບານ ເພື່ອຮັບປະ

ກັນຄວາມຖືກຕ້ອງ ແລະເປັນເອກະ ພາບໃນການປະຕິບັດກົດໝາຍ;

4. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 31.(ໃໝ່) ສິດໃນການທວງເອົາຄະດີ**

ສານອຸທອນ ມີສິດທວງເອົາຄະດີຈາກ ສານປະຊາຊົນແຂວງ, ນະຄອນ ມາດຳເນີນ ແລະພິຈາລະນາເປັນຂັ້ນອຸທອນດ້ວຍຕົນເອງ ຖ້າເຫັນວ່າຄະດີນັ້ນມີຄວາມສຳຄັນ ຫຼືມີຄວາມຫຍຸ້ງຍາກເປັນພິເສດ ຕາມລະບຽບການ.

**ມາດຕາ 32.( ໃໝ່ ) ສິດ ແລະ ໜ້າທີ່ຂອງປະທານສານອຸທອນ**

ປະທານສານອຸທອນ ມີສິດນັ່ງເປັນປະທານໃນທຸກຄະນະສານຕັດສິນ ຂອງສານອຸທອນ.

ປະທານສານອຸທອນມີສິດ ແລະ ໜ້າທີ່:

1. ຊີ້ນຳ ນຳພາການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງສານອຸທອນ;
2. ລາຍງານສະພາບການຈັດຕັ້ງ ແລະການເຄື່ອນໄຫວວຽກງານຂອງສານອຸທອນ ຕໍ່ກອງປະຊຸມໃຫຍ່ຜູ້ພິພາກສາ ແລະສານປະຊາຊົນສູງສຸດ;
3. ປະຕິບັດສິດ ແລະໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 33.(ໃໝ່) ຮອງປະທານສານອຸທອນ**

ຮອງປະທານສານອຸທອນມີສິດນັ່ງເປັນປະທານໃນທຸກຄະນະສານຕັດສິນ ຂອງສານອຸທອນ.

ຮອງປະທານສານອຸທອນມີໜ້າທີ່ຊ່ວຍປະທານສານອຸທອນ ໃນການປະຕິບັດໜ້າທີ່ວຽກງານ ແລະຈະໄດ້ຮັບຜິດຊອບວຽກງານໃດໜຶ່ງສະເພາະ ຕາມການມອບໝາຍຂອງປະທານສານອຸທອນ.

ໃນກໍລະນີທີ່ປະທານສານອຸທອນຕິດຂັດ ແມ່ນຮອງປະທານສານອຸທອນ ຜູ້ທີ່ໄດ້ຮັບມອບໝາຍ ເປັນຜູ້ວ່າການແທນ.

**ມາດຕາ 34.(ໃໝ່) ຄະນະປະທານສານອຸທອນ**

ຄະນະປະທານສານອຸທອນແມ່ນຄະນະນຳຂອງສານອຸທອນ ຊຶ່ງປະກອບດ້ວຍ: ປະທານ, ບັນດາຮອງປະທານ, ບັນດາປະທານຄະນະສານ ແລະ ຜູ້ພິພາກສາຈຳນວນໜຶ່ງ ຂອງສານອຸທອນ.

ຄະນະປະທານສານອຸທອນມີສິດ ແລະ ໜ້າທີ່:

1. ຄົ້ນຄວ້າບັນຫາສຳຄັນ ເປັນຕົ້ນແມ່ນຄະດີປະຫານຊີວິດ ແລະຄະດີອື່ນໆ ທີ່ມີຄວາມສຳຄັນ;
2. ສະຫຼຸບຕີລາຄາ ແລະຖອດຖອນບົດຮຽນກ່ຽວກັບການເຄື່ອນໄຫວວຽກງານຂອງສານ ເປັນຕົ້ນແມ່ນການດຳເນີນຄະດີ;
3. ຄົ້ນຄວ້າເອກະສານ ທີ່ຈະນຳສະເໜີຕໍ່ກອງປະຊຸມໃຫຍ່ຜູ້ພິພາກສາ ແລະສານປະຊາ

ຊົນສູງສຸດ;

4. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 35.(ໃໝ່) ຄະນະສານຂອງສານອຸທອນ**

ຄະນະສານຂອງສານອຸທອນປະກອບດ້ວຍ: ຄະນະສານອາຍາ, ຄະນະສານແພ່ງ, ຄະນະສານການຄ້າ, ຄະນະສານຄອບຄົວ, ຄະນະສານເດັກ ແລະຄະນະສານອື່ນໆ.

ແຕ່ລະຄະນະສານຂອງສານອຸທອນມີ: ປະທານຄະນະສານ, ຮອງປະທານຄະນະສານ, ຜູ້ພິພາກສາ, ພະນັກງານຊ່ວຍວຽກຜູ້ພິພາກສາ ແລະ ຈ່າສານ.

ຄະນະສານຂອງສານອຸທອນມີສິດ ແລະ ໜ້າທີ່ຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ 1, 2 ແລະ 4 ຂອງມາດຕາ 30 ຂອງກົດໝາຍສະບັບນີ້.

**ມາດຕາ 36.(ໃໝ່) ກົງຈັກຊ່ວຍວຽກຂອງສານອຸທອນ**

ເພື່ອຮັບປະກັນການເຄື່ອນໄຫວປະຕິບັດໜ້າທີ່ວຽກງານຂອງຕົນ ສານອຸທອນມີກົງຈັກຊ່ວຍວຽກ ຄື: ຫ້ອງການ ແລະພະແນກຈຳນວນໜຶ່ງ.

ການເຄື່ອນໄຫວວຽກງານຂອງກົງຈັກຊ່ວຍວຽກ ກຳນົດໄວ້ໃນລະບຽບພາຍໃນຂອງສານອຸທອນ.

## ໝວດທີ 3 ສານປະຊາຊົນແຂວງ , ນະຄອນ

**ມາດຕາ 37.(ໃໝ່) ທີ່ຕັ້ງ ແລະ ພາລະບົດບາດຂອງສານປະຊາຊົນແຂວງ, ນະຄອນ**

ສານປະຊາຊົນແຂວງ, ນະຄອນ ແມ່ນສານໜຶ່ງໃນລະບົບສານປະຊາຊົນແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ມີພາລະບົດບາດດຳເນີນການຕັດສີນຄະດີເປັນຂັ້ນຕົ້ນ ຄະດີທີ່ບໍ່ຂຶ້ນກັບສິດອຳນາດຂອງສານປະຊາຊົນເມືອງ, ເທດສະບານ ແລະ ພິພາກສາ ເປັນຂັ້ນອຸທອນ ຄະດີທີ່ສານປະຊາຊົນເມືອງ, ເທດສະບານ ໄດ້ຕັດສີນແລ້ວ.

**ມາດຕາ 38.(ໃໝ່) ການສ້າງຕັ້ງສານປະຊາຊົນແຂວງ, ນະຄອນ**

ໃນແຕ່ລະແຂວງ, ນະຄອນ ມີການສ້າງຕັ້ງສານປະຊາຊົນແຂວງ, ນະຄອນ.

**ມາດຕາ 39.(ໃໝ່) ໂຄງປະກອບຂອງສານປະຊາຊົນແຂວງ, ນະຄອນ**

ສານປະຊາຊົນແຂວງ, ນະຄອນ ປະກອບດ້ວຍ:

ປະທານ;

ບັນດາຮອງປະທານ;

ບັນດາຜູ້ພິພາກສາ;

ຄະນະປະທານ;

ບັນດາຄະນະສານ;

ກົງຈັກຊ່ວຍວຽກ.

**ມາດຕາ 40.(ໃໝ່) ສິດ ແລະ ໜ້າທີ່ຂອງສານປະຊາຊົນແຂວງ, ນະຄອນ**

ສານປະຊາຊົນແຂວງ, ນະຄອນ ມີສິດ ແລະ ໜ້າທີ່ :

1. ພິຈາລະນາຕັດສິນເປັນຂັ້ນຕົ້ນ ຄະດີທີ່ບໍ່ຂຶ້ນກັບສິດອຳນາດຂອງສານປະຊາຊົນເມືອງ, ເທດສະບານ;
2. ພິຈາລະນາພິພາກສາເປັນຂັ້ນອຸທອນ ຄະດີທີ່ສານປະຊາຊົນເມືອງ, ເທດສະບານ ໄດ້ຕັດສິນແລ້ວ ຊຶ່ງຖືກຂໍອຸທອນໂດຍຄູ່ຄວາມ ຫຼື ຖືກຄັດຄ້ານໂດຍໄອຍະການປະຊາຊົນ;
3. ຜັນຂະຫຍາຍຄຳແນະນຳທາງດ້ານກົດໝາຍ ແລະ ທາງດ້ານປະເພນີສານຂອງສານປະຊາຊົນສູງສຸດ ໃຫ້ສານປະຊາຊົນເມືອງ, ເທດສະບານ ເພື່ອຮັບປະກັນຄວາມຖືກຕ້ອງ ແລະເປັນເອກະພາບໃນການປະຕິບັດກົດໝາຍ;
4. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 41.(ໃໝ່) ສິດໃນການທວງ ແລະ ສະເໜີສົ່ງຄະດີ**

ສານປະຊາຊົນແຂວງ, ນະຄອນ ມີສິດທວງເອົາຄະດີຈາກສານປະຊາຊົນເມືອງ, ເທດສະບານມາດຳເນີນ ແລະ ພິຈາລະນາຕັດສິນເປັນຂັ້ນຕົ້ນດ້ວຍຕົນເອງ ຖ້າເຫັນວ່າຄະດີນັ້ນມີຄວາມສຳຄັນ ຫຼື ມີຄວາມຫຍຸ້ງຍາກເປັນພິເສດ ຕາມລະບຽບການ.

ໃນກໍລະນີເຫັນວ່າຄະດີ ທີ່ຈະພິຈາລະນາເປັນຂັ້ນອຸທອນ ຊຶ່ງຕົກຢູ່ໃນສິດອຳນາດຂອງຕົນ ມີຄວາມສັບສົນ ບໍ່ສາມາດແກ້ໄຂດ້ວຍຕົນເອງໄດ້ ສານປະຊາຊົນແຂວງ, ນະຄອນ ຈະສົ່ງສຳນວນຄະດີທີ່ກ່ຽວຂ້ອງ ຂຶ້ນໃຫ້ສານອຸທອນດຳເນີນ ແລະ ພິຈາລະນາພິພາກສາເປັນຂັ້ນອຸທອນກໍໄດ້ ແຕ່ຕ້ອງໄດ້ຮັບຄວາມເຫັນດີຈາກປະທານສານອຸທອນນັ້ນເສັຍກ່ອນ.

**ມາດຕາ 42.(ໃໝ່) ສິດ ແລະ ໜ້າທີ່ຂອງປະທານສານປະຊາຊົນແຂວງ, ນະຄອນ**

ປະທານສານປະຊາຊົນແຂວງ, ນະຄອນ ມີສິດນັ່ງເປັນປະທານໃນທຸກຄະນະສານຕັດສິນ ຂອງສານປະຊາຊົນແຂວງ, ນະຄອນ.

ປະທານສານປະຊາຊົນແຂວງ, ນະຄອນ ມີສິດ ແລະ ໜ້າທີ່ :

1. ຊີ້ນຳ ນຳພາການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງສານປະຊາຊົນແຂວງ, ນະຄອນ;
2. ລາຍງານສະພາບການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງສານປະຊາຊົນແຂວງ, ນະຄອນ ຕໍ່ກອງປະຊຸມໃຫຍ່ຜູ້ພິພາກສາ, ສານປະຊາຊົນສູງສຸດ ແລະ

ສານອຸທອນທີ່ຕິນຂຶ້ນກັບ;

3. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 43.(ໃໝ່) ຮອງປະທານສານປະຊາຊົນແຂວງ, ນະຄອນ**

ຮອງປະທານສານປະຊາຊົນແຂວງ, ນະຄອນ ມີສິດນັ່ງເປັນປະທານໃນທຸກຄະນະສານຕັດສິນຂອງສານປະຊາຊົນແຂວງ, ນະຄອນ.

ຮອງປະທານສານປະຊາຊົນແຂວງ, ນະຄອນ ມີໜ້າທີ່ຊ່ວຍປະທານສານປະຊາຊົນແຂວງ, ນະຄອນ ໃນການປະຕິບັດໜ້າທີ່ວຽກງານ ແລະ ຈະໄດ້ຮັບຜິດຊອບວຽກງານໃດໜຶ່ງສະເພາະ ຕາມການມອບໝາຍຂອງປະທານສານປະຊາຊົນແຂວງ, ນະຄອນ.

ໃນກໍລະນີທີ່ປະທານສານປະຊາຊົນແຂວງ, ນະຄອນຕິດຂັດ ແມ່ນຮອງປະທານສານປະຊາຊົນແຂວງ, ນະຄອນ ຜູ້ທີ່ໄດ້ຮັບມອບໝາຍເປັນຜູ້ວ່າການແທນ.

**ມາດຕາ 44.(ໃໝ່) ຄະນະປະທານສານປະຊາຊົນແຂວງ, ນະຄອນ**

ຄະນະປະທານສານປະຊາຊົນແຂວງ, ນະຄອນ ແມ່ນຄະນະນຳຂອງສານປະຊາຊົນແຂວງ, ນະຄອນ ຊຶ່ງປະກອບດ້ວຍ: ປະທານ, ບັນດາຮອງປະທານ, ບັນດາປະທານຄະນະສານ ແລະ ຜູ້ພິພາກສາຈຳນວນໜຶ່ງ ຂອງສານປະຊາຊົນແຂວງ, ນະຄອນ.

ຄະນະປະທານສານປະຊາຊົນແຂວງ, ນະຄອນ ມີສິດ ແລະໜ້າທີ່ຄືກັນກັບຄະນະປະທານສານອຸທອນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 34 ຂອງກົດໝາຍສະບັບນີ້.

**ມາດຕາ45.(ໃໝ່) ຄະນະສານຂອງສານປະຊາຊົນແຂວງ, ນະຄອນ**

ຄະນະສານຂອງສານປະຊາຊົນແຂວງ, ນະຄອນ ປະກອບດ້ວຍ: ຄະນະສານອາຍາ, ຄະນະສານແພ່ງ, ຄະນະສານການຄ້າ, ຄະນະສານຄອບຄົວ, ຄະນະສານເດັກ ແລະຄະນະສານອື່ນໆ.

ແຕ່ລະຄະນະສານຂອງສານປະຊາຊົນແຂວງ, ນະຄອນ ມີ: ປະທານຄະນະສານ, ຮອງປະທານຄະນະສານ, ຜູ້ພິພາກສາ, ພະນັກງານຊ່ວຍວຽກຜູ້ພິພາກສາ ແລະຈ່າສານ.

ຄະນະສານຂອງສານປະຊາຊົນແຂວງ, ນະຄອນມີສິດ ແລະ ໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ 1, 2 ແລະ 4 ຂອງມາດຕາ 40 ຂອງກົດໝາຍສະບັບນີ້.

**ມາດຕາ 46.(ໃໝ່) ກົງຈັກຊ່ວຍວຽກຂອງສານປະຊາຊົນແຂວງ, ນະຄອນ**

ເພື່ອຮັບປະກັນການເຄື່ອນໄຫວປະຕິບັດໜ້າທີ່ວຽກງານຂອງຕົນ ສານປະຊາຊົນແຂວງ, ນະຄອນມີກົງຈັກຊ່ວຍວຽກຄື: ຫ້ອງການ ແລະໜ່ວຍງານຈຳນວນໜຶ່ງ.

ການເຄື່ອນໄຫວວຽກງານຂອງກົງຈັກຊ່ວຍວຽກ ໄດ້ກຳນົດໄວ້ໃນລະບຽບພາຍໃນ ຂອງສານປະຊາຊົນແຂວງ, ນະຄອນ.

## ໝວດທີ 4 ສານປະຊາຊົນເມືອງ, ເທດສະບານ

**ມາດຕາ 47.(ໃໝ່) ທີ່ຕັ້ງ ແລະ ພາລະບົດບາດ ຂອງສານປະຊາຊົນເມືອງ, ເທດສະບານ**

ສານປະຊາຊົນເມືອງ, ເທດສະບານ ແມ່ນສານໜຶ່ງໃນລະບົບສານປະຊາຊົນແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ມີພາລະບົດບາດສຶກສາອົບຮົມ, ໄກ່ເກ່ຍຄູ່ຄວາມໃນຄະດີເປັນຕົ້ນຕໍ ແລະ ດໍາເນີນການຕັດສິນຄະດີທີ່ເບົາບາງ ແລະ ມີມູນຄ່າຕໍ່າ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 48.(ໃໝ່) ການສ້າງຕັ້ງສານປະຊາຊົນເມືອງ, ເທດສະບານ**

ໃນແຕ່ລະເມືອງ, ເທດສະບານໃຫ້ສ້າງຕັ້ງສານປະຊາຊົນເມືອງ, ເທດສະບານຂຶ້ນ.

ໃນກໍລະນີທີ່ເມືອງ, ເທດສະບານໃດໜຶ່ງ ຫາກບໍ່ທັນສາມາດສ້າງຕັ້ງສານປະຊາຊົນຂອງຕົນຂຶ້ນໄດ້ນັ້ນ ປະທານສານປະຊາຊົນສູງສຸດ ມີສິດອອກຂໍ້ຕົກລົງມອບອໍານາດໃຫ້ສານປະຊາຊົນເມືອງ, ເທດສະບານໃກ້ຄຽງຮັບຜິດຊອບເມືອງ, ເທດສະບານ ດັ່ງກ່າວຊົ່ວຄາວ.

**ມາດຕາ49.(ໃໝ່) ໂຄງປະກອບຂອງສານປະຊາຊົນເມືອງ, ເທດສະບານ**

ສານປະຊາຊົນເມືອງ, ເທດສະບານປະກອບດ້ວຍ:

ປະທານ;

ຜູ້ພິພາກສາ;

ກົງຈັກຊ່ວຍວຽກ.

**ມາດຕາ 50.(ໃໝ່) ສິດ ແລະ ໜ້າທີ່ຂອງສານປະຊາຊົນເມືອງ, ເທດສະບານ**

ສານປະຊາຊົນເມືອງ, ເທດສະບານ ມີສິດ ແລະ ໜ້າທີ່ :

1. ສຶກສາອົບຮົມ, ໄກ່ເກ່ຍຄູ່ຄວາມໃນຄະດີ ເປັນຕົ້ນຕໍ;
2. ພິຈາລະນາຕັດສິນ:
   - ຄະດີແພ່ງ ຊຶ່ງມີມູນຄ່າບໍ່ເກີນ 20.000.000 ກີບ;
   - ຄະດີສາຍຜົວເມຍທີ່ບໍ່ມີຂໍ້ຂັດແຍ່ງກ່ຽວກັບສິນສົມສ້າງ, ໜີ້ສິນ ຫຼື ບັນຫາລູກ;
   - ຄະດີກ່ຽວກັບການຮ້ອງຂໍເອົາຄ່າລ້ຽງດູ;
   - ຄະດີກ່ຽວກັບການຮັບຮູ້ການເປັນສາຍຍາດ, ການເປັນຜູ້ທີ່ບໍ່ມີຄວາມສາມາດທາງດ້ານການປະພຶດ, ການຫາຍສາບສູນ ແລະການປະກາດການເສັຍຊີວິດຂອງບຸກຄົນໃດໜຶ່ງ;
   - ຄະດີອາຍາກ່ຽວກັບການກະທໍາຜິດເບົາບາງ ທີ່ໄດ້ກໍານົດໄວ້ໃນ ມາດຕາ 22 ຂອງກົດໝາຍອາຍາ ;

- ຄະດີອື່ນໆ ທີ່ກົດໝາຍໄດ້ມອບສິດອຳນາດໃຫ້.

**ມາດຕາ 51.(ໃໝ່) ກົງຈັກຊ່ວຍວຽກຂອງສານປະຊາຊົນເມືອງ, ເທດສະບານ**

ກົງຈັກຊ່ວຍວຽກຂອງສານປະຊາຊົນເມືອງ, ເທດສະບານ ແມ່ນຈ່າສານ.

ການເຄື່ອນໄຫວວຽກງານຂອງກົງຈັກຊ່ວຍວຽກ ໄດ້ກຳນົດໄວ້ໃນລະບຽບພາຍໃນຂອງສານປະຊາຊົນເມືອງ, ເທດສະບານ.

## ໝວດທີ 5 ສານທະຫານ

**ມາດຕາ 52.(ໃໝ່) ທີ່ຕັ້ງ ແລະ ພາລະບົດບາດຂອງສານທະຫານ**

ສານທະຫານແມ່ນສານໜຶ່ງໃນລະບົບສານປະຊາຊົນແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ມີພາລະບົດບາດ ດຳເນີນການຕັດສິນຄະດີອາຍາ ກ່ຽວກັບການກະທຳຜິດທີ່ເກີດຂຶ້ນໃນຂົງເຂດວຽກງານ ການທະຫານ ຫຼື ໃນຂອບເຂດຕັ້ງທັບຂອງທະຫານ.

**ມາດຕາ 53.(ໃໝ່) ລະບົບການຈັດຕັ້ງ ແລະ ບຸກຄະລາກອນຂອງສານທະຫານ**

ສານທະຫານປະກອບດ້ວຍ: ສານທະຫານຂັ້ນສູງ ແລະ ສານທະຫານພາກ.

ສານທະຫານຂັ້ນສູງຕັ້ງຢູ່ນະຄອນຫລວງວຽງຈັນ.

ໃນແຕ່ລະພາກ ໃຫ້ສ້າງຕັ້ງສານທະຫານພາກຂຶ້ນ.

ໃນກໍລະນີທີ່ພາກໃດໜຶ່ງ ຫາກບໍ່ສາມາດສ້າງຕັ້ງສານທະຫານພາກຂອງຕົນຂຶ້ນໄດ້ນັ້ນ ປະທານສານປະຊາຊົນສູງສຸດ, ໂດຍປະສານສົມທົບກັບລັດຖະມົນຕີວ່າການກະຊວງປ້ອງກັນປະເທດ, ມີສິດອອກຂໍ້ຕົກລົງມອບອຳນາດໃຫ້ສານທະຫານພາກໃກ້ຄຽງຮັບຜິດຊອບ ພາກດັ່ງກ່າວຊົ່ວຄາວ.

ສານທະຫານຂັ້ນສູງ ແລະສານທະຫານພາກມີ: ຫົວໜ້າ, ບັນດາຮອງຫົວໜ້າ, ບັນດາຜູ້ພິພາກສາ ແລະຈ່າສານ.

ຫົວໜ້າສານທະຫານຂັ້ນສູງ ເປັນຮອງປະທານສານປະຊາຊົນສູງສຸດ.

ຜູ້ພິພາກສາຂອງສານທະຫານຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍຄະນະປະຈຳສະພາແຫ່ງຊາດ ຕາມການສະເໜີຂອງປະທານສານປະຊາຊົນສູງສຸດ ພາຍຫລັງທີ່ໄດ້ປະສານສົມທົບກັບລັດຖະມົນຕີວ່າການກະຊວງປ້ອງກັນປະເທດ.

**ມາດຕາ 54.(ໃໝ່) ການເຄື່ອນໄຫວວຽກງານຂອງສານທະຫານ**

ການເຄື່ອນໄຫວວຽກງານຂອງສານທະຫານ ກຳນົດໄວ້ໃນນິຕິກຳສະເພາະ ຊຶ່ງຄະນະປະຈຳສະພາແຫ່ງຊາດເປັນຜູ້ຕົກລົງ ຕາມການສະເໜີຂອງປະທານສານປະຊາຊົນສູງສຸດ ພາຍຫຼັງທີ່ໄດ້ປະສານສົມທົບກັບລັດຖະມົນຕີວ່າການກະຊວງປ້ອງກັນປະເທດ.

## ພາກທີ III ຜູ້ພິພາກສາ

**ມາດຕາ 55.(ໃໝ່) ເງື່ອນໄຂ ແລະ ມາດຕະຖານຂອງຜູ້ພິພາກສາ**

ຜູ້ພິພາກສາຂອງສານປະຊາຊົນແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຕ້ອງມີເງື່ອນໄຂ ແລະມາດຕະຖານລວມ ດັ່ງນີ້:

1. ເປັນພົນລະເມືອງລາວ ທີ່ມີອາຍຸແຕ່ 25 ປີຂຶ້ນໄປ;
2. ເປັນຜູ້ມີທັດສະນະຫຼັກໝັ້ນການເມືອງໜັກແໜ້ນ;
3. ເປັນຜູ້ມີຄຸນສົມບັດດີ, ມີຄວາມຈົງຮັກພັກດີຕໍ່ຜົນປະໂຫຍດລວມຂອງຊາດ, ມີຈັນຍາທຳ;
4. ເປັນຜູ້ໄດ້ຮັບການສຶກສາວິຊາກົດໝາຍ ຫຼື ບຳລຸງວິຊາກົດໝາຍ;
5. ເປັນຜູ້ທີ່ມີສຸຂະພາບສົມບູນດີ.

ສຳລັບເງື່ອນໄຂ, ມາດຕະຖານ ແລະ ລະດັບຊັ້ນລະອຽດຂອງຜູ້ພິພາກສາທີ່ບັນຈຸເຂົ້າໃນສານປະຊາຊົນແຕ່ລະຂັ້ນ ກຳນົດໄວ້ໃນລະບຽບການສະເພາະ ຊຶ່ງຮັບຮອງເອົາໂດຍຄະນະປະຈຳສະພາແຫ່ງຊາດ.

**ມາດຕາ 56.(ໃໝ່) ສິດ ແລະ ໜ້າທີ່ຂອງຜູ້ພິພາກສາ**

ຜູ້ພິພາກສາມີສິດ ແລະໜ້າທີ່:

1. ຄົ້ນຄວ້າສຳນວນຄະດີທີ່ໄດ້ຮັບມອບໝາຍ;
2. ເອົາຄຳໃຫ້ການຂອງໂຈດ, ຈຳເລີຍ ແລະບຸກຄົນອື່ນທີ່ເຂົ້າຮ່ວມໃນການດຳເນີນຄະດີ;
3. ເກັບກຳຂໍ້ມູນຫລັກຖານກ່ຽວກັບຄະດີ;
4. ໄກ່ເກ່ຍຄະດີ;
5. ນັ່ງເປັນຄະນະສານຕັດສິນຄະດີ;
6. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 57.(ໃໝ່) ການປົກປ້ອງຜູ້ພິພາກສາ**

ຜູ້ພິພາກສາຈະຖືກຈັບຕົວ ຫຼືດຳເນີນຄະດີໄດ້ ກໍຕໍ່ເມື່ອຫາກໄດ້ຮັບຄວາມເຫັນດີຈາກຄະນະປະຈຳສະພາແຫ່ງຊາດເສັຍກ່ອນ.

ໃນກໍລະນີທີ່ຈຳເປັນ ຫາກໄດ້ຈັບຕົວຜູ້ພິພາກສາຂອງສານປະຊາຊົນຢ່າງຮີບດ່ວນແລ້ວ ຕ້ອງລາຍງານຕໍ່ຄະນະປະຈຳສະພາແຫ່ງຊາດໃນທັນທີ ເພື່ອຂໍຄວາມເຫັນກ່ຽວກັບການດຳເນີນຄະດີ ໃນຂັ້ນຕໍ່ໄປ.

ນອກຈາກນີ້ ການຈັບຕົວຜູ້ພິພາກສາຂອງສານອຸທອນ, ສານປະຊາຊົນແຂວງ, ນະຄອນ, ສານ

ປະຊາຊົນເມືອງ, ເທດສະບານນັ້ນ ຕ້ອງລາຍງານໃຫ້ສານປະຊາຊົນສູງສຸດຊາບນຳ.

ສຳລັບການຈັບຕົວຜູ້ພິພາກສາຂອງສານທະຫານນັ້ນ ຕ້ອງລາຍງານໃຫ້ສານປະຊາຊົນສູງສຸດ ແລະ ກະຊວງປ້ອງກັນປະເທດ ຊາບນຳ.

## ພາກທີ IV ກອງປະຊຸມໃຫຍ່ຜູ້ພິພາກສາ

**ມາດຕາ 58.(ໃໝ່) ທີ່ຕັ້ງ, ພາລະບົດບາດ ແລະ ການປະກອບຂອງກອງປະຊຸມໃຫຍ່ຜູ້ພິພາກສາ**

ກອງປະຊຸມໃຫຍ່ຜູ້ພິພາກສາ ແມ່ນການຈັດຕັ້ງສູງສຸດຂອງອົງການພິພາກສາ, ມີພາລະບົດບາດຊີ້ນຳບັນດາສານປະຊາຊົນ ໃນການປະຕິບັດກົດໝາຍໃຫ້ຖືກຕ້ອງ ແລະ ເປັນເອກະພາບໃນທົ່ວປະເທດ.

ກອງປະຊຸມໃຫຍ່ຜູ້ພິພາກສາປະກອບດ້ວຍ: ປະທານສານປະຊາຊົນສູງສຸດ ເປັນປະທານ, ບັນດາຮອງປະທານ ແລະ ຜູ້ພິພາກສາທັງໝົດ ຂອງສານປະຊາຊົນສູງສຸດ, ບັນດາປະທານສານອຸທອນ, ສານປະຊາຊົນແຂວງ, ນະຄອນ ແລະ ສານທະຫານຂັ້ນສູງ. ນອກຈາກນີ້ກໍຈະເຊີນຄະນະປະຈຳສະພາແຫ່ງຊາດ, ໄອຍະການປະຊາຊົນສູງສຸດ, ລັດຖະມົນຕີວ່າການກະຊວງຍຸຕິທຳ, ລັດຖະມົນຕີວ່າການກະຊວງປ້ອງກັນປະເທດ, ລັດຖະມົນຕີວ່າການກະຊວງປ້ອງກັນຄວາມສະຫງົບ ແລະ ບຸກຄົນອື່ນໆທີ່ຈຳເປັນເຂົ້າຮ່ວມນຳ; ບຸກຄົນທີ່ຖືກເຊີນເຂົ້າຮ່ວມນັ້ນ ມີສິດສະເໜີຄວາມຄິດຄວາມເຫັນ ແຕ່ບໍ່ມີສິດລົງຄະແນນສຽງ.

**ມາດຕາ 59.(ໃໝ່) ໜ້າທີ່ຂອງກອງປະຊຸມໃຫຍ່ຜູ້ພິພາກສາ**

ກອງປະຊຸມໃຫຍ່ຜູ້ພິພາກສາ ມີໜ້າທີ່:

1. ຮັບຟັງບົດລາຍງານຂອງສະພາຜູ້ພິພາກສາ ແລະ ຄະນະສານຂອງສານປະຊາຊົນສູງສຸດ, ຂອງປະທານສານອຸທອນ, ສານປະຊາຊົນແຂວງ, ນະຄອນ ແລະ ສານທະຫານຂັ້ນສູງ ກ່ຽວກັບການປະຕິບັດວຽກງານຂອງສານ ແລະ ທິດທາງວຽກງານໃນຕໍ່ໜ້າ;
2. ຕີລາຄາສັງລວມສະຖິຕິສານ, ການປະຕິບັດວຽກງານ ແລະ ການນຳໃຊ້ກົດໝາຍຂອງສານ;
3. ກວດຄືນຄຳສັ່ງ, ຄຳຊີ້ຂາດ ແລະ ຄຳຕົກລົງອື່ນໆ ຂອງສານປະຊາຊົນທຸກຂັ້ນ ແລະ ສານທະຫານ ທີ່ມີຂໍ້ຜິດພາດ ເພື່ອແນະນຳໃຫ້ສານທີ່ມີສິດອຳນາດກ່ຽວຂ້ອງແກ້ໄຂ;
4. ກຳນົດທິດທາງການປັບປຸງການຈັດຕັ້ງສານປະຊາຊົນ;
5. ອອກມະຕິຕົກລົງກ່ຽວກັບການຈັດຕັ້ງສານ, ການປະຕິບັດວຽກງານຂອງສານ ໃນການປະຕິບັດກົດໝາຍ;
6. ພິຈາລະນາບັນຫາອື່ນໆທີ່ສຳຄັນ ຊຶ່ງພົວພັນກັບວຽກງານຂອງສານ.

**ມາດຕາ 60. (ໃໝ່) ການຮຽກໂຮມກອງປະຊຸມໃຫຍ່ຜູ້ພິພາກສາ**

ກອງປະຊຸມໃຫຍ່ຜູ້ພິພາກສາເປີດຂຶ້ນຢ່າງໜ້ອຍສອງປີຕໍ່ເທື່ອ.

ກອງປະຊຸມໃຫຍ່ຜູ້ພິພາກສາຈະດຳເນີນໄດ້ ກໍຕໍ່ເມື່ອຫາກມີສະມາຊິກເຂົ້າຮ່ວມຢ່າງໜ້ອຍສອງສ່ວນສາມ ຂອງຈຳນວນສະມາຊິກທັງໝົດ.

ມະຕິຕົກລົງຂອງກອງປະຊຸມໃຫຍ່ຜູ້ພິພາກສາຈະມີຄຸນຄ່າໄດ້ ກໍຕໍ່ເມື່ອໄດ້ຮັບຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສະມາຊິກທີ່ເຂົ້າຮ່ວມກອງປະຊຸມ.

## ພາກທີ V ຈຳນວນພົນ, ງົບປະມານ, ເຄື່ອງແບບ ແລະ ຕາປະທັບ ຂອງສານປະຊາຊົນ

### ມາດຕາ 61.(ໃໝ່) ຈຳນວນພົນຂອງສານປະຊາຊົນ

ຈຳນວນພົນຂອງສານປະຊາຊົນສູງສຸດ, ສານອຸທອນ, ສານປະຊາຊົນແຂວງ, ນະຄອນ ແລະ ສານປະຊາຊົນເມືອງ, ເທດສະບານ ແມ່ນຄະນະປະຈຳສະພາແຫ່ງຊາດ ເປັນຜູ້ຕົກລົງ ຕາມການສະເໜີຂອງປະທານສານປະຊາຊົນສູງສຸດ.

ຈຳນວນພົນຂອງສານທະຫານຂັ້ນສູງ, ສານທະຫານພາກ ແມ່ນຄະນະປະຈຳສະພາແຫ່ງຊາດ ເປັນຜູ້ຕົກລົງ ຕາມການສະເໜີຂອງປະທານສານປະຊາຊົນສູງສຸດ ພາຍຫຼັງທີ່ໄດ້ປະສານສົມທົບກັບລັດຖະມົນຕີວ່າການກະຊວງປ້ອງກັນປະເທດ.

### ມາດຕາ 62.(ໃໝ່ ) ງົບປະມານຂອງສານປະຊາຊົນ

ງົບປະມານຂອງສານປະຊາຊົນສູງສຸດ ແລະສານອຸທອນ ແມ່ນສານປະຊາຊົນສູງສຸດ ເປັນຜູ້ສ້າງແຜນ ແລ້ວສະເໜີໃຫ້ລັດຖະບານ ເພື່ອນຳສະເໜີຕໍ່ສະພາແຫ່ງຊາດພິຈາລະນາ.

ງົບປະມານຂອງສານປະຊາຊົນແຂວງ, ນະຄອນ ແລະ ສານປະຊາຊົນເມືອງ, ເທດສະບານ ແມ່ນສານປະຊາຊົນແຂວງ, ນະຄອນ ແລະ ສານປະຊາຊົນເມືອງ, ເທດສະບານ ເປັນຜູ້ສ້າງແຜນ ເພື່ອສະເໜີໃຫ້ອົງການປົກຄອງຂັ້ນຂອງຕົນພິຈາລະນາ.

ງົບປະມານຂອງສານທະຫານຂັ້ນສູງ ແລະ ສານທະຫານພາກ ແມ່ນສານດັ່ງກາວເປັນຜູ້ສ້າງແຜນ ແລ້ວສະເໜີກະຊວງປ້ອງກັນປະເທດ ເພື່ອນຳສະເໜີຕໍ່ລັດຖະບານ ພາຍຫລັງທີ່ໄດ້ປະສານສົມທົບກັບສານປະຊາຊົນສູງສຸດແລ້ວ.

### ມາດຕາ 63.(ໃໝ່) ເຄື່ອງແບບຂອງສານປະຊາຊົນ

ເຄື່ອງແບບຂອງຄະນະສານຕັດສິນ ແລະ ຂອງພະນັກງານສານ ແມ່ນປະຕິບັດຕາມຂໍ້ຕົກລົງຂອງຄະນະປະຈຳສະພາແຫ່ງຊາດ.

### ມາດຕາ 64.(ໃໝ່) ຕາປະທັບຂອງສານປະຊາຊົນ

ຕາປະທັບຂອງສານປະຊາຊົນ ເປັນຮູບວົງມົນ, ຢູ່ກາງວົງມົນມີເຄື່ອງໝາຍຊາດ, ເນື້ອໃນຢູ່ໃນ

ຂອບວົງມົນເບື້ອງເທິງຂຽນວ່າ " ສານປະຊາຊົນສູງສຸດ ", ເບື້ອງລຸ່ມຂຽນຊື່ ຂອງສານປະຊາຊົນຂັ້ນ ຂອງຕົນ ຊຶ່ງຂັ້ນດ້ວຍຮູບດາວຫ້າແຈ.

## ພາກທີ VI ບົດບັນຍັດສຸດທ້າຍ

**ມາດຕາ 65.(ໃໝ່) ການຈັດຕັ້ງປະຕິບັດ**

ສານປະຊາຊົນແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 66.(ໃໝ່) ຜົນສັກສິດ**

ກົດໝາຍສະບັບນີ້ມີຜົນສັກສິດ ນັບແຕ່ວັນປະທານປະເທດແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ເປັນຕົ້ນໄປ.

ກົດໝາຍສະບັບນີ້ປ່ຽນແທນກົດໝາຍວ່າດ້ວຍສານປະຊາຊົນແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 32 / ສປສ, ລົງວັນທີ 23 ເດືອນທັນວາ ປີ1989.

ຂໍ້ກຳນົດ, ບົດບັນຍັດໃດທີ່ຂັດກັບກົດໝາຍ ສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ປະທານສະພາແຫ່ງຊາດ**